ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທະນາຄານ ແຫ່ງ ສປປ ລາວ ຂໍ່ານັບຮັບຕ້ອນວັນຕ້ານການສໍ້ລາດບັງຫຼວງສາກົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ




ໃນຕອນເຊົ້າຂອງວັນທີ 07 ມີນາ 2025 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການເຜີຍແຜ່ວຽກງານກວດກາ, ວຽກງານຕ້ານການສໍ້ລາດບັງຫຼວງ ແລະ ການຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ເພື່ອສະເຫຼີມສະຫຼອງວັນຕ້ານການສໍ້ລາດບັງຫຼວງສາກົນ ຄົບຮອບ 21 ປີ (9 ທັນວາ 2003 - 9 ທັນວາ 2024), ວັນສ້າງຕັ້ງອົງການກວດກາພັກ-ລັດ ຄົບຮອບ 43 ປີ (16 ກຸມພາ 1982 - 16 ກຸມພາ 2025), ວັນສ້າງຕັ້ງອົງການອາຊຽນແພັກ ຄົບຮອບ 20 ປີ (15 ທັນວາ 2004 - 15 ທັນວາ 2024), ໂດຍການເປັນປະທານຮ່ວມຂອງ ທ່ານ ວຽງສະຫວັນ ໄຊຍະວົງ ຫົວໜ້າກົມກວດກາ ທຫລ ແລະ ທ່ານ ເທບພະໄທ ພັນກ້າ ຮັກສາການຫົວໜ້າກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ, ອົງການກວດກາແຫ່ງລັດ. ມີຜູ້ເຂົ້າຮ່ວມຈາກບັນດາກົມພາຍໃນ ທຫລ, ອົງການກວດກາແຫ່ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງຈຳນວນ 200 ກວ່າທ່ານ.

ຈຸດປະສົງຂອງການຈັດພິທີດັ່ງກ່າວ ເພື່ອສະແດງໃຫ້ເຫັນເຖິງຄວາມຕັ້ງໃຈຂອງ ສປປ ລາວ ໃນຄວາມເອົາໃຈໃສ່ຢ່າງຈິງຈັງຕໍ່ການຈັດຕັ້ງປະຕິບັດສົນທິສັນຍາສະຫະປະຊາຊາດ ວ່າດ້ວຍຕ້ານການສໍ້ລາດບັງຫຼວງ ໃນຖານະທີ່ເປັນລັດພາຄີ, ເພື່ອເຮັດໃຫ້ສັງຄົມລາວປາສະຈາກການສໍ້ລາດບັງຫຼວງ, ເຮັດໃຫ້ການນຳພາຂອງພັກ ມີຄວາມເຂັ້ມແຂງ, ປະເທດຊາດໄດ້ຮັບການພັດທະນາ, ສັງຄົມມີຄວາມສາມັກຄີ, ສີວິໄລ ແລະ ຍຸຕິທຳ, ພ້ອມທັງເປັນການຮັບຟັງການປະຖະກະຖາ ແລະ ຊົມເຊີຍວັນຕ້ານການສໍ້ລາດບັງຫຼວງສາກົນ ໄປພ້ອມກັນກັບປະຊາຊາດໃນທົ່ວໂລກ ທີ່ຈັດຕັ້ງການສະເຫຼີມສະຫຼອງວັນທີ່ມີຄວາມໝາຍຄວາມສຳຄັນດັ່ງກ່າວນີ້. ນອກຈາກນີ້, ຍັງເປັນການສຶກສາອົບຮົມໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງທະນາຄານ ໃຫ້ຮັບຮູ້, ເຂົ້າໃຈຄວາມໝາຍຄວາມສຳຄັນຂອງວັນຕ້ານການສໍ້ລາດບັງຫຼວງສາກົນ ແລະ ມີຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ຜົນຮ້າຍ ກໍ່ຄືໄພອັນຕະລາຍຂອງການສໍ້ລາດບັງຫຼວງ ພ້ອມທັງເປັນເຈົ້າການເຂົ້າຮ່ວມສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເຮັດໃຫ້ປະເທດຊາດ ຮັ່ງມີເຂັ້ມແຂງ, ສັງຄົມມີປະຊາທິປະໄຕ, ສີວິໄລ ແລະ ຍຸຕິທຳ, ບໍ່ກ້າສໍ້ລາດບັງຫຼວງ, ບໍ່ສາມາດສໍ້ລາດບັງຫຼວງ ແລະ ບໍ່ຢາກສໍ້ລາດບັງຫຼວງ.

ພິທີດັ່ງກ່າວໄດ້ດຳເນີນໄປເປັນເວລາເຄິ່ງວັນ ຊຶ່ງບັນລຸໝາກຜົນຕາມລະດັບຄາດໝາຍທີ່ກຳນົດໄວ້ເປັນຢ່າງດີ.



# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ,
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ.